ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 1719 /ທຄຕລ...2024.......
ນະຄອນຫຼວງວຽງຈັນ, ວັນທີ:...08/05/2024....

# ແຈ້ງການ

ຮຽນ: - ບັນດາທ່ານລູກຄ້າຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- ທຸກພາກສ່ວນທີ່ກ່ຽວຂ້ອງ.

ເລື່ອງ: ການນໍາໃຊ້ເຄື່ອງໝາຍຫົວໜ່ວຍຕົວເລກ.

- ອີງຕາມ ກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ໜັງສືແຈ້ງການກ່ຽວກັບການປະຕິບັດເຄື່ອງໝາຍຕົວເລກຈໍານວນເງິນ ແລະ ຈໍານວນເສດສ່ວນ ສະບັບເລກທີ 0016/ກບຊ, ລົງວັນທີ 13 ມີນາ 2024.

ຜູ້ອໍານວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ອອກແຈ້ງການກ່ຽວກັບການນໍາໃຊ້ເຄື່ອງໝາຍຫົວໜ່ວຍຕົວເລກຂອງ ທຄຕລ ດັ່ງລຸ່ມນີ້:

1). ການນໍາໃຊ້ເຄື່ອງໝາຍຫົວໜ່ວຍຕົວເລກເຊັ່ນ: ພັນ, ໝື່ນ, ແສນ, ລ້ານ, ຕື່ຂຶ້ນໄປ ແມ່ນຈະໄດ້ນໍາໃຊ້ເຄື່ອງໝາຍ ຈຸດ ( , ) ແລະ ຈໍານວນເສດສ່ວນແມ່ນນໍາໃຊ້ເຄື່ອງໝາຍຈໍ້າ ( . ).

➢ ຕົວຢ່າງ: ຈໍານວນໜຶ່ງລ້ານ
- ຕາມຮູບແບບເກົ່າ: **1.000.000,00**
- ຕາມຮູບແບບໃໝ່: **1,000,000.00**

2). ຂອບເຂດການນໍາໃຊ້:
- ສໍາລັບເອກະສານ ຫຼື ຂໍ້ມູນຕ່າງໆ ທີ່ອອກຈາກ ທຄຕລ ແມ່ນຈະໄດ້ປັບມານໍາໃຊ້ຕາມຮູບແບບໃໝ່;
- ສໍາລັບການຂຽນແບບຟອມ ຫຼື ເອກະສານຕ່າງໆ ທີ່ບັນດາທ່ານລູກຄ້າຂອງ ທຄຕລ ເປັນຜູ້ຂຽນ ຫຼື ສ້າງຂຶ້ນ ໃນໄລຍະນໍາໃຊ້ເບື້ອງຕົ້ນແມ່ນໃຫ້ນໍາໃຊ້ຕາມຮູບແບບເກົ່າ ຫຼື ໃໝ່ກໍ່ໄດ້ ຈົນກວ່າບັນດາທ່ານລູກຄ້າຂອງ ທຄຕລ ຈະມີຄວາມສະດວກໃນການນໍາໃຊ້ຕາມຮູບແບບໃໝ່.

3). ແຈ້ງການສະບັບນີ້ເລີ່ມຈັດຕັ້ງປະຕິບັດນັບຕັ້ງແຕ່ວັນທີ 13 ພຶດສະພາ 2024 ເປັນຕົ້ນໄປ.

ພ້ອມດຽວກັນນີ້, ທຄຕລ ກໍ່ຂໍອະໄພໃນຄວາມບໍ່ສະດວກມານະທີ່ນີ້ດ້ວຍ,

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານລູກຄ້າ ຂອງ ທຄຕລ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ.

**ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ